# ຮູບພາບ ຂອງຄວາມຮັກ



ບົດຮຽນທີ 7 ສຳລັບສະບາໂຕທີ 15 ກໍລະກົດ, 2026

“ບັດນີ້ ຍັງຕັ້ງຢູ່ສາມສິ່ງຄື: ຄວາມເຊື່ອ ຄວາມຫວັງໃຈ ແລະຄວາມຮັກ ແຕ່ສິ່ງທີ່ໃຫຍ່ກວ່າແມ່ນຄວາມຮັກ.”
1 ໂກຣິນໂທ 13:13



1 ກຣທ 13 ເປັນທີ່ຮູ້ຈັກກັນດີໃນຊື່ “ບົດແຫ່ງຄວາມຮັກ” ບົດນີ້ບໍ່ໄດ້ກ່າວເຖິງຄວາມຮັກແບບໂຣແມັນຕິກ ແຕ່ກ່າວເຖິງຄວາມຮັກທີ່ເລິກເຊິ່ງກວ່ານັ້ນ: ນັ້ນກໍ່ຄືຄວາມຮັກຈາກພຣະເຈົ້າ

ອຈ ໂປໂລ ໄດ້ອະທິບາຍຢ່າງດີເລີດເຖິງວິທີການສະແດງຄວາມຮັກຂອງພຣະເຈົ້າທີ່ຊົງປະທານລົງມາໃນຫົວໃຈ ແລະ ໃນຊີວິດຂອງພວກເຮົາ(ໂຣມມັນ 5:5).

ຄວາມຮັກເປັນແຮງຜັກດັນເບື້ອງຫລັງການກະທຳທັງໝົດຂອງພວກເຮົາ, ເປັນເຫດຜົນທີ່ພວກເຮົາເຮັດສິ່ງທີ່ເປັນປະໂຫຍດຕໍ່ຜູ້ທີ່ພວກເຮົາມີສາຍສຳພັນ





## ພາບລັກຂອງຄວາມຮັກ

- ຄວາມຍິ່ງໃຫຍ່ຂອງຄວາມຮັກ
  - ຫົນທາງທີ່ດີເລີດ
- ລັກສະນະຂອງຄວາມຮັກ
  - ສິ່ງທີ່ຄວາມຮັກເຮັດ
  - ສິ່ງທີ່ຄວາມຮັກບໍ່ເຮັດ
  - ພາບລັກຂອງພຣະເຢຊູ
- ຄວາມອົດທົນຂອງຄວາມຮັກ
  - ຄຸນນະທຳທີ່ຍິ່ງໃຫຍ່ທີ່ສຸດ

# ຄວາມຍິ່ງໃຫຍ່
# ຂອງຄວາມຮັກ



# ວິທີທີ່ດີທີ່ສຸດ

"ແຕ່ເຈົ້າທັງຫລາຍ ຈົ່ງຮ້ອນໃຈສະແຫວງຫາຂອງພຣະຣາຊທານອັນສຳຄັນກວ່ານັ້ນ. ແລະເຮົາຈະສຳແດງທາງອັນດີຫລາຍກວ່ານັ້ນອີກ ແກ່ພວກເຈົ້າ." 1 ໂກຣິນໂທ 12:31




ອຈ ໂປໂລ ກຳລັງກ່າວເຖິງຄວາມຮັກແບບໃດ ໃນ 1 ກຣທ 13, ແລະ ເປັນຫຍັງຄວາມຮັກແບບນີ້ຈຶ່ງເໜືອກວ່າຂອງປະທານອື່ນໆ? (1 ກຣທ 12:31-13:3)

ໃນພາສາກຣີກ ມີຫລາຍຄຳທີ່ໃຊ້ອະທິບາຍເຖິງຄວາມຮັກ ແຕ່ ອຈ ໂປໂລ ເລືອກໃຊ້ຄຳວ່າ ອາກາເປ *agape* (ຄວາມຮັກທີ່ບໍ່ເຫັນແກ່ໂຕ, ບໍ່ມີເງື່ອນໄຂ, ແລະຄິດເຖິງຄົນອື່ນ ໂດຍມຸ່ງຫວັງພຽງຄວາມສຸກຂອງຄົນອື່ນ), ເຊິ່ງເປັນຄຳດຽວກັນກັບທີ່ທ່ານ ໂຢຮັນໄດ້ກ່າວໄວ້ວ່າ "ພຣະເຈົ້າຊົງເປັນຄວາມຮັກ" (1 ຢຮ 4:8).



ຂອງປະທານຝ່າຍຈິດວິນຍານໃດໆ ກໍ່ບໍ່ມີປະໂຫຍດຖ້າວ່າບໍ່ໄດ້ນຳໃຊ້ດ້ວຍຄວາມຮັກ , ອັນທີ່ຈິງ ການກະທຳ ແລະ ຄວາມຄິດທັງໝົດຂອງພວກເຮົາຄວນເຕັມໄປດ້ວຍຄວາມຮັກແບບ ອາກາເປ *agape love*.



ພຣະເຢຊູຊົງເຕືອນພວກເຮົາວ່າ: ເພາະຄວາມຊົ່ວຮ້າຍ, ຄວາມຮັກນີ້ຈະເຢັນຊາລົງ (ມທ 24:12). ແຕ່ພວກເຮົາຕ້ອງບໍ່ປ່ອຍໃຫ້ສິ່ງນີ້ເກີດຂຶ້ນກັບພວກເຮົາ, ໃນບ້ານຂອງພວກເຮົາ ຫລືໃນຄຣິດຕະຈັກຂອງພວກເຮົາ

# ລັກສະນະຂອງຄວາມ
# ຮັກ

# ສິ່ງທີ່ຄວາມຮັກກະທຳ

"ຄວາມຮັກກໍອົດທົນດົນນານ, ຄວາມຮັກຄືຄວາມເມດຕາກະລຸນາ, ຄວາມຮັກບໍ່ເຫິງສາ, ບໍ່ອວດອ້າງ ບໍ່ຈອງຫອງ....ຄວາມຮັກສູ້ທົນທຸກສິ່ງ ໄວ້ວາງໃຈໃນທຸກສິ່ງ ແລະ ພຽນທົນເອົາທຸກສິ່ງ." (1 ກຣທ 13:4-7)

| | | |
|---|---|---|
| ອົດທົນດົນນານ | *makrothymeō*: ມີຈິດໃຈທີ່ເຂັ້ມແຂງ, ອົດທົນ, ໃຈເຢັນ | ຈົ່ງອົດທົນ ແລະ ຍອມຮັບຄວາມຜິດພາດຂອງຄົນອື່ນ |
| ເມດຕາ | *jrēsteuomai* : ກະທຳ, ເຮັດດ້ວຍຄວາມຍິນດີ | ຈົ່ງມີຄວາມເມດຕາ ແລະ ເຫັນອົກເຫັນໃຈ |
| ຍິນດີໃນຄວາມຈິງ | *synjairō*: ສະແດງຄວາມເຫັນໃຈ, ສະແດງຄວາມຍິນດີ | ຈົ່ງຍິນດີກັບຜູ້ທີ່ສະໜັບສະໜູນຄວາມຈິງ |
| ອົດທົນຕໍ່ທຸກສິ່ງ | *stegō*: ອົດທົນດ້ວຍຄວາມສະຫງົບ (ອົດທົນຢ່າງໃຈເຢັນ) | ຈົ່ງປົກປິດ ແລະ ງຽບກ່ຽວກັບຄວາມຜິດຂອງຄົນອື່ນ, ໂດຍບໍ່ເປີດເຜີຍ |
| ເຊື່ອໃນທຸກສິ່ງ | *pisteuō*: ມີສັດທາ, ໃຫ້ຄວາມໜ້າເຊື່ອຖື, ໄວ້ວາງໃຈ | ຈົ່ງບໍ່ຕັດສິນ, ແຕ່ໃຫ້ໂອກາດ |
| ມີຫວັງໃນທຸກສິ່ງ | *Elpizō:* ລໍຖ້າ ຫລື ໄວ້ວາງໃຈໄດ້ | ມີຄວາມຫວັງໃນສິ່ງດີໆ ວ່າຈະເກີດຂຶ້ນສະເໝີ |
| ອົດທົນຕໍ່ທຸກສິ່ງ | *hypomenō*: ມຸ່ງໝັ້ນ, ອົດທົນ, ມີຄວາມເຂັ້ມແຂງ ພາກພຽນພະຍາຍາມ | ອົດທົນຕໍ່ຄວາມທຸກຍາກລຳບາກ, ການທົດລອງ ແລະ ຖືກຂົ່ມເຫັງ |



# ສິ່ງທີ່ຄວາມຮັກບໍ່ເຮັດ

"[...] ບໍ່ເຮັດການອັນບໍ່ສຸພາບ, ບໍ່ຄິດເຫັນປະໂຫຍດສ່ວນຕົວແຕ່ຝ່າຍດຽວ, ບໍ່ມີໃຈຮ້າຍງ່າຍ ບໍ່ມັກຈົດຈຳຄວາມຜິດ ບໍ່ຍິນດີໃນການອະທຳ[...]" (1 ກຣທ 13:4-7)



| | | |
|---|---|---|
| ບໍ່ອິດສາ | *zeloō*: ມີຄວາມຮູ້ສຶກໃຈຮ້ອນແຮງ | ບໍ່ອິດສາຜູ້ອື່ນ |
| ບໍ່ອວດຕົນເອງ | *perpereuomai* : ໂອ້ອວດ, ຂີ້ໂມ້ | ບໍ່ຕ້ອງການຄຳຊົມຈາກຄົນອື່ນ |
| ບໍ່ຍິ່ງຜະຫຍອງ | *fysioō*: ເຍີ້ຍິ່ງ | ບໍ່ມີມຸມມອງທີ່ເກີນຈິງກ່ຽວກັບຕົນເອງ |
| ບໍ່ມີການປະພຶດທີ່ຫຍາບຄາຍ | *asjēmoneō*: ປະພຶດໂຕຢ່າງບໍ່ເໝາະສົມ | ບໍ່ກະທຳການໃດໆ ທີ່ຂັດຕໍ່ບັດທັດຖານທາງສັງຄົມ |
| ບໍ່ສະແຫວງຫາຜົນປະໂຫຍດສ່ວນຕົວ | *zēteō*: ຄົ້ນຫາ | ສະຫລະສິດຂອງຕົນເພື່ອຜົນປະໂຫຍດຂອງຄົນອື່ນ |
| ບໍ່ຍົ້ວຍຸ | *paroxynō* : ເຮັດໃຫ້ບາງສິ່ງຮຸນແຮງຂຶ້ນ | ບໍ່ອ່ອນໄຫວຫລາຍເກີນໄປ |
| ບໍ່ຄິດຮ້າຍ | *logizomai* : ກວດສອບ | ໃຫ້ອະໄພ ແລະ ບໍ່ຄິດເຖິງຄວາມຜິດທີ່ໄດ້ຮັບ |
| ບໍ່ຍິນດີໃນຄວາມຊົ່ວ | *jairō*: ລ່າເລີງ, ມີຄວາມສຸກ | ບໍ່ຍິນດີໃນຄວາມຜິດພາດ ແຕ່ພະຍາຍາມແກ້ໄຂຄວາມຜິດນັ້ນ |

# ຮູບພາບຂອງພຣະເຢຊູ

“ນີ້ແຫລະ ແມ່ນຂໍ້ຄຳສັ່ງຂອງເຮົາ: ຄືຈົ່ງຮັກຊຶ່ງກັນແລະກັນ ເໝືອນດັ່ງເຮົາຮັກພວກເຈົ້າ.” ໂຢຮັນ 15:12

ອົດທົນຕໍ່ການຖືກຕີ ການຖືກດູໝິ່ນ ແລະ ການຖືກຢຽດຢາມ (ມທ 27:27-31)

**ພຣະອົງທົນທຸກ ເປັນເວລາດົນ**



ຫ່ວງໄຍຕໍ່ທຸກຄົນທີ່ກຳລັງທົນທຸກ

**ໃຈດີ**



ສອນຄວາມຈິງດ້ວຍຄວາມຊັດເຈນ ແລະ ໜັກແໜ້ນ

**ຍິນດີໃນຄວາມຈິງ**



ບໍ່ໄດ້ຕັດສິນລົງໂທດຜູ້ທີ່ເຮັດບາບ ແຕ່ໃຫ້ອະໄພ (ຢຮ 8:10-11)

**ແບກຮັບທຸກສິ່ງ**



ເຊື່ອໝັ້ນໃນຄວາມຈິງໃຈ (ລກ 19:8-9)

**ເຊື່ອທຸກສິ່ງ**



ກຽມຄວາມພ້ອມກັບກັບສາວົກທັງ 12 ຄົນສຳລັບວຽກງານປະກາດ

**ຫວັງທຸກສິ່ງ**



ອົດທົນຕໍ່ຄວາມຫິວໂຫຍ, ເຈັບປວດ

**ອົດທົນຕໍ່ທຸກສິ່ງ**



# ຮູບພາບຂອງພຣະເຢຊູ

"ນີ້ແຫລະ ແມ່ນຂໍ້ຄຳສັ່ງຂອງເຮົາ: ຄືຈົ່ງຮັກຊຶ່ງກັນແລະກັນ ເໝືອນດັ່ງເຮົາຮັກພວກເຈົ້າ." ໂຢຮັນ 15:12

ບໍ່ສະແຫວງຫາ ກຽດຕິຍົດ ແຕ່ຊົງໃຫ້ ກຽດກັບຄົນຕໍ່າຕ້ອຍ

ບໍ່ອິດສາ



ເປັນກະສັດ ແຕ່ບໍ່ໂອ້ອວດ

ບໍ່ຊົງຍິ່ງຍະໂສ



ເຕັມໃຈທີ່ຈະເຮັດໜ້າທີ່ ເຖິງຄົນອື່ນຈະວ່າຕໍ່າ ຕ້ອຍກໍ່ຕາມ

ບໍ່ເຍີ້ຍິ່ງ



ປະຕິບັດຕໍ່ທຸກຄົນດ້ວຍ ຄວາມສຸພາບ ແລະ ເໝາະສົມ

ບໍ່ປະພຶດຫຍາບ ຄາຍ



ເຮັດຕາມພຣະປະສົງ ຂອງພຣະບິດາສະເໝີ (ຢຮ 6:38)

ບໍ່ສະແຫວງຫາຜົນ ປະໂຫຍດສ່ວນໂຕ



ເຖິງຈະຖືກທຳຮ້າຍ ແຕ່ກໍ່ຕອບໂຕ້ດ້ວຍ ຄວາມສຸພາບ (ຢຮ 18:22-23)

ບໍ່ໂກດເຄືອງ



ຂໍອະໄພໂທດໃຫ້ແກ່ຜູ້ ທີ່ຄຶງພຣະອົງໄວ້ເທິງ ໄມ້ກາງແຂນ (ລກ 23:34)

ບໍ່ຄິດຮ້າຍ



ກ່າວຢ່າງຮຸນແຮງຕໍ່ ພວກຟາລິຊາຍທີ່ບໍ່ ຍຸດຕິທຳ (ມທ 23:27-28)

ບໍ່ຍິນດີກັບຄວາມ ຊົ່ວຊ້າ



# ຄວາມອົດທົນຂອງ
# ຄວາມຮັກ



# ຄຸນນະທຳທີ່ຍິ່ງໃຫຍ່ທີ່ສຸດ

"ບັດນີ້ ຍັງຕັ້ງຢູ່ສາມສິ່ງຄື: ຄວາມເຊື່ອ ຄວາມຫວັງໃຈ ແລະຄວາມຮັກ ແຕ່ສິ່ງທີ່ໃຫຍ່ກວ່າແມ່ນຄວາມຮັກ."
1 ໂກຣິນໂທ 13:13

ຊາວໂຄຣິນໂທສະແດງໃຫ້ເຫັນເຖິງທັດສະນະຄະຕິທີ່ບໍ່ເປັນໄປຕາມຮູບແບບຂອງຄວາມຮັກ ນັ້ນກໍ່ຄື: ພວກເຂົາອິດສາ, ໂອ້ອວດ, ຍິ່ງຍະໂສ, ປະພຶດບໍ່ເໝາະສົມ, ເຫັນແກ່ໂຕ, ໂກດງ່າຍ, ແຄ້ນ ແລະ ຍອມໃຫ້ບາບເກີດຂຶ້ນ



ເຊັ່ນດຽວກັນກັບພວກເຂົາ, ພວກເຮົາຕ້ອງລະຖິ້ມຂໍ້ບົກຜ່ອງເຫລົ່ານີ້ ແລະ ຈະເລີນຂຶ້ນໃນຄຸນນະທຳແຫ່ງຄວາມຮັກ, ດັ່ງທີ່ ອຈ ໂປໂລ ໄດ້ສອນພວກເຮົາ ໃຫ້ນຳໃຊ້ຂອງປະທານຝ່າຍຈິດວິນຍານໃນທາງທີ່ຖືກຕ້ອງ, ນອກຈາກຄວາມຮັກແລ້ວ ເພິ່ນຍັງເຊີນຊວນໃຫ້ພວກເຮົາຍຶດໝັ້ນໃນຄຸນນະທຳອີກສອງປະການຄື: ຄວາມເຊື່ອ ແລະ ຄວາມຫວັງ





ເມື່ອພຣະເຢຊູສະເດັດມາ, ຄວາມບາບຈະໝົດໄປ ແລະ ພວກເຮົາຈະໄດ້ມີຊີວິດນິຣັນດອນກັບພຣະອົງໃນເວລານັ້ນ, ແລະ ຄວາມຮັກຈະໝັ້ນຄົງຢູ່ຕະຫລອດໄປເປັນນິດ (1 ກຣທ 13:8).

“ພຣະເຈົ້າຊົງເປັນຄວາມຮັກ. ຄວາມຮັກຂອງພຣະບິດາ ແລະ ພຣະບຸດແມ່ນຄຸນລັກສະນະຂອງຜູ້ເຊື່ອທຸກຄົນ. ພຣະວັດຈະນະຂອງພຣະເຈົ້າແມ່ນຊ່ອງທາງທີ່ຄວາມຮັກຂອງພຣະເຈົ້າຖືກສົ່ງຕໍ່ມາຫາທຸກຄົນ. ຄວາມຈິງຂອງພຣະເຈົ້າແມ່ນສື່ກາງທີ່ເຂົ້າເຖິງສະຕິປັນຍາ. ພຣະວິນຍານບໍລິສຸດຖືກປະທານໃຫ້ແກ່ມະນຸດຜູ້ທີ່ເປັນຕົວແທນເຮັດວຽກຮ່ວມກັນກັບອົງກອນຂອງພຣະເຈົ້າ. ພຣະອົງຊົງປ່ຽນແປງຄວາມຄິດ ແລະ ພະລັກສະນະ, ຊ່ວຍໃຫ້ມະນຸດສາມາດອົດທົນໄດ້ຄືກັນກັບໄດ້ເຫັນພຣະອົງຜູ້ທີ່ບໍ່ສາມາດເບິ່ງເຫັນໄດ້. ຄວາມຮັກທີ່ສົມບູນແບບສາມາດມີຄວາມສຸກໄດ້ໂດຍຜ່ານການເຊື່ອໃນຄວາມຈິງ ແລະ ການຮັບເອົາພຣະວິນຍານບໍລິສຸດເທົ່ານັ້ນ.”

**EGW (Our Father Cares, October 9)**